ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໄປສະນີ

ໂທລະຄົມມະນາຄົມ ແລະ ການສື່ສານ

ຫ້ອງການ

ເລກທີ 1229 /ປທສ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 13 AUG 2013

# ແຈ້ງການ

ເຖິງ: ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆ, ບໍລິສັດ, ໂຮງແຮມ ແລະຫ້າງຮ້ານ ຕ່າງໆ.

ເລື່ອງ: ການນໍາເຂົ້າ, ການຈໍາໜ່າຍ ແລະການນໍາໃຊ້ເຄື່ອງ ວິທະຍຸສື່ສານ (ເຄື່ອງສື່ສານໂຟນີ)

- ອີງຕາມ ດໍາລັດຂອງທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສະບັບເລກທີ 303/ນຍ, ລົງວັນທີ 26/09/2011, ວ່າດ້ວຍການ ຈັດ ຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ.
- ອີງໃສ່ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ) ເລກທີ 09/ສພຊ, ລົງວັນທີ 21/12/2011.

ໃນປະຈຸບັນນີ້, ເຫັນວ່າເຄື່ອງວິທະຍຸສື່ສານໂຟນີ ທີ່ໃຫ້ ກະຊວງໄປສະນີ ໂທລະຄົມມະນາຄົມ ແລະການສື່ສານຄຸ້ມຄອງ ຍັງມີບຸກຄົນ, ນິຕິບຸກຄົນ ຫົວໜ່ວຍທຸລະກິດ ແລະຫ້າງຮ້ານຕ່າງໆ ຈໍານວນໜຶ່ງນໍາເຂົ້າ, ຈໍາໜ່າຍ ແລະນໍາໃຊ້ເຄື່ອງສື່ສານໂຟນີ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ໄດ້ຂຶ້ນທະບຽນນໍາໃຊ້.

ດັ່ງນັ້ນ, ເພື່ອເຮັດໃຫ້ການຄຸ້ມຄອງ ແລະການນໍາໃຊ້ເຄື່ອງສື່ສານໂຟນີ ຖືກຕ້ອງຕາມກົດໝາຍ ກົມໂທລະຄົມມະນາຄົມ, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານຈຶ່ງອອກແຈ້ງການດັ່ງນີ້ :

## I. ການນໍາເຂົ້າ, ຈໍາໜ່າຍ, ຕິດຕັ້ງເຄືອຂ່າຍ ແລະນໍາໃຊ້ ເຄື່ອງສື່ສານໂຟນີ :

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະຕ່າງປະເທດ ທີ່ຕ້ອງການນໍາເຂົ້າ, ຕິດຕັ້ງເຄືອຂ່າຍເຄື່ອງໂຟນີ ເພື່ອນໍາໃຊ້ເອງ ບໍ່ແມ່ນເພື່ອຈໍາໜ່າຍ ຕ້ອງໄດ້ຮັບອະນຸຍາດ ຈາກ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະການ ສື່ສານ ຫຼື ພະແນກໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງເສຍກ່ອນ;
2. ບຸກຄົນ ແລະນິຕິບຸກຄົນ ທີ່ຕ້ອງການດໍາເນີນທຸລະກິດ ກ່ຽວກັບເຄື່ອງສື່ສານໂຟນີ ຕ້ອງໄດ້ຮັບອະນຸຍາດ ດໍາເນີນທຸ ລະກິດ ການນໍາເຂົ້າ, ການຈໍາໜ່າຍ ແລະການສ້ອມແປງຕາມລະບຽບການ;
3. ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນໍາເຂົ້າ ແລະນໍາໃຊ້ເຄື່ອງວິທະຍຸສື່ສານ (ເຄື່ອງສື່ສານໂຟນີ) ໂດຍບໍ່ໄດ້ຮັບ ອະນຸຍາດ .

## II. ການຈັດຕັ້ງປະຕິບັດ

ກົມໂທລະຄົມມະນາຄົມ, ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະການສື່ສານ ແລະ ພະແນກ ໄປສະນີ ໂທລະຄົມມະນາຄົມ ແລະການສື່ສານ ແຂວງ/ ນະຄອນຫຼວງ ເປັນເຈົ້າການໃນການຈັດຕັ້ງປະຕິບັດຕາມ ໜ້າທີ່ ແລະ ຂອບເຂດສິດ ຂອງຕົນດັ່ງນີ້:

ຖະໜົນລ້ານຊ້າງ 01000 ນະຄອນຫຼວງວຽງຈັນ, ສປປ ລາວ ໂທ: (+856-21) 218927, 219858, ແຟກ: (+856-21) 219857
Email: laoict@mpt.gov.la

1. ປະສານສົມທົບກັບບັນດາອົງການຈັດຕັ້ງຂອງລັດ ແລະພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງເຜີຍແຜ່ແຈ້ງການສະບັບນີ້ໃຫ້ທຸກພາກສ່ວນແຕ່ສູນກາງຮອດທ້ອງຖິ່ນຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ;
2. ປະສານສົມທົບກັບບັນດາອົງການຈັດຕັ້ງຂອງລັດ ແລະພາກສ່ວນທີ່ກ່ຽວຂ້ອງ ໃນການລົງກວດກາ ແລະຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ຢ່າງເຂັ້ມງວດ;
3. ສຳລັບ ອຸປະກອນເຄື່ອງສື່ສານໂຟນີ ທີ່ຍັງບໍ່ທັນໄດ້ຂຶ້ນທະບຽນ ຕ້ອງຮີບຮ້ອນໄປຂໍຂຶ້ນທະບຽນ ທີ່ ກະຊວງໄປສະນີ ໂທລະຄົມມະນາຄົມ ແລະການສື່ສານ ຫຼື ພະແນກໄປສະນີ ໂທລະຄົມມະນາຄົມ ແລະການສື່ສານ ແຂວງ/ນະຄອນຫຼວງ ພາຍໃນ 45 ວັນລັດຖະການ ນັບແຕ່ວັນລົງລາຍເຊັນ ແຈ້ງການສະບັບນີ້ເປັນຕົ້ນໄປ, ຫຼັງຈາກນັ້ນ ຖ້າກວດກາເຫັນ ເຄື່ອງວິທະຍຸສື່ສານ (ເຄື່ອງສື່ສານໂຟນີ) ທີ່ນຳເຂົ້າ ຫຼື ນຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝຕາມກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ) ແລະກົດໝາຍອື່ນໆທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆ, ບໍລິສັດ, ໂຮງແຮມ ແລະຫ້າງຮ້ານໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ, ນັບແຕ່ມື້ແຈ້ງການນີ້ເປັນຕົ້ນໄປ.

**ຫົວໜ້າຫ້ອງການ**

ບຸນສະເຫຼີມໄຊ ເຄນນາວົງ

ຖະໜົນລ້ານຊ້າງ 01000 ນະຄອນຫຼວງວຽງຈັນ, ສປປ ລາວ ໂທ: (+856-21) 218927, 219858, ແຟກ: (+856-21) 219857
Email: laoict@mpt.gov.la